# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


**I.** ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ..................................01 - 05

**II.** ການເຄື່ອນໄຫວຂອງ ການນຳຂັ້ນສູງ.....................................................................06 - 08

**III.** ການເຄື່ອນໄຫວຂອງ ຄະນະພົວພັນຕ່າງປະເທດສູນກາງພັກ...............................................09 - 12

**IV.** ການເຄື່ອນໄຫວຂອງ ວຽກງານການທູດປະຊາຊົນ........................................................13


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ເດືອນມັງກອນ 2026


ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ

Tel: 030 9876030, Email: Ri.dept.la@Gmail.com, Website: www.cerccp.org.la

## I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ

### 1. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງຕ່າງປະເທດ

#### 1) ພັກກອມມູນິດຫວຽດນາມ

ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XIV ຂອງພັກກອມມູນິດຫວຽດນາມ ໄດ້ດໍາເນີນລະຫວ່າງວັນທີ 20-23 ມັງກອນ 2026 ທີ່ຫໍປະຊຸມແຫ່ງຊາດ, ນະຄອນຫຼວງຮ່າໂນ້ຍ ພາຍໃຕ້ຫົວຂໍ້: "ພາຍໃຕ້ທຸງໄຊອັນສະຫງ່າລາສີຂອງພັກ, ສຸມທຸກກໍາລັງກາຍ ກໍາລັງໃຈ ປະຕິບັດບັນດາເປົ້າໝາຍພັດທະນາປະເທດຊາດ ຈົນເຖິງປີ 2030 ໃຫ້ສໍາເລັດຜົນ, ເປັນເຈົ້າຕົນເອງທາງດ້ານຍຸດທະສາດ, ກຸ້ມຕົນເອງ, ໝັ້ນໃຈ, ກ້າວຂຶ້ນຢ່າງແຂງແຮງ ໃນສັກກະຫຼາດແຫ່ງການບິນຕົວຂຶ້ນຂອງຊາດ ເພື່ອສັນຕິພາບ, ເອກະລາດ, ປະຊາທິປະໄຕ, ຮັ່ງມີເຂັ້ມແຂງ, ສີວິໄລ ແລະ ຄວາມຜາສຸກ, ກ້າວຂຶ້ນສູ່ລັດທິສັງຄົມນິຍົມຢ່າງໜັກແໜ້ນ" ຊຶ່ງມີນັກປະຕິວັດອາວຸໂສ, ວິລະຊົນແຫ່ງຊາດ, ພ້ອມດ້ວຍສະມາຊິກພັກສົມບູນ 1,500 ກວ່າສະຫາຍ ທີ່ເປັນຕົວແທນໃຫ້ ແກ່ສະມາຊິກພັກທົ່ວປະເທດ (5.6 ລ້ານກວ່າສະຫາຍ) ເຂົ້າຮ່ວມ ກອງປະ ຊຸມຄັ້ງປະຖົມມະລຶກ ຂອງຄະນະບໍລິຫານສູນກາງພັກ ສະໄໝທີ XIV ໄດ້ເປັນເອກະພາບເລືອກຕັ້ງເອົາ ກໍາມະການສົມບູນສູນກາງພັກ 180 ສະຫາຍ, ກໍາມະການສໍາຮອງສູນກາງພັກ 20 ສະຫາຍ, ກໍາມະການກົມການເມືອງສູນກາງພັກ 19 ສະຫາຍ, ຄະນະເລຂາທິການສູນກາງພັກ 13 ສະຫາຍ ແລະ ເປັນເອກະພາບເລືອກເອົາ ສະຫາຍ ໂຕ ເລິມ ເປັນເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ສະໄໝທີ XIV. ກອງປະຊຸມໃຫຍ່ ໄດ້ຮັບຮອງເອົາບັນດາເອກະສານ ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XIII ແລະ ຮັບຮອງເອົາບັນດາແຜນນະໂຍບາຍ, ນະໂຍບາຍຊີ້ຂາດ ແລະ ບັນດາທິດທາງ, ໜ້າວຽກຈຸດສຸມ, ບັນດາທິດທາງການບຸກທະລຸຍຸດທະສາດ ເພື່ອສ້າງສາ, ພັດທະນາປະເທດຊາດ ຢ່າງວ່ອງໄວຍືນຍົງ ແລະ ປົກປັກຮັກສາປະເທດສັງຄົມນິຍົມຫວຽດນາມ ໃນສະພາບການໃໝ່. ໃນນັ້ນ ໄດ້ກໍານົດ ການພັດທະນາເສດຖະກິດ-ສັງຄົມ, ການປົກປັກຮັກສາສິ່ງແວດລ້ອມ ເປັນໃຈກາງ, ກໍ່ສ້າງພັກ ເປັນແກ່ນສານ, ປົກປັກຮັກສາວັດທະນະທໍາ, ເພີ່ມທະວີວຽກງານປ້ອງກັນຊາດ ປ້ອງກັນຄວາມສະຫງົບ ແລະ ຍູ້ແຮງການພົວພັນຕ່າງປະເທດ, ບຸກທະລຸການພັດທະນາວິທະຍາສາດ, ເຕັກໂນໂລຊີ, ນະວັດຕະກໍາ, ຫັນເປັນດີຈີຕອນແຫ່ງຊາດ ແມ່ນກໍາລັງໜູນໃຈກາງຂອງການພັດທະນາ. ໂອກາດນີ້, ສະຫາຍ ໂຕ ເລິມ ໄດ້ເນັ້ນໜັກວ່າ: ຈິດໃຈ "ຍຶດໝັ້ນ" ແມ່ນຈັນຍາບັນການເມືອງ, ແມ່ນການສືບທອດມູນເຊື້ອປະຫວັດສາດ ແລະ ບັນດາບົດຮຽນຈາກຂະບວນວິວັດປ່ຽນແປງ ໃໝ່, ແມ່ນຄໍາໝັ້ນສັນຍາຢ່າງແຮງຂອງພັກ ບໍ່ວ່າຢູ່ໃນສະພາບການໃດ ກໍລ້ວນແຕ່ຍຶດໝັ້ນເອກະລາດແຫ່ງຊາດ ຕິດພັນກັບສັງຄົມນິຍົມ, ຍຶດໝັ້ນກັບເສັ້ນທາງສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ເປັນເຈົ້າຕົນເອງ, ເພິ່ງຕົນເອງ, ຍາມໃດກໍຖືຜົນປະໂຫຍດ ຂອງຊາດ ເໜືອກວ່າສິ່ງໃດໝົດ, ຖືຄວາມອິ່ມໜໍາສໍາລານສົມບູນພູນສຸກຂອງປະຊາຊົນ ເປັນໃຈກາງ. ຈິດໃຈ "ປ່ຽນແປງໃໝ່" ແມ່ນຄໍາຮຽກຮ້ອງທີ່ມີລັກສະນະແຫ່ງຍຸກສະໄໝ ຖ້າບໍ່ມີການປ່ຽນແປງໃໝ່ ການປະຕິຮູບຈະບໍ່ສາມາດບຸກທະລຸໄດ້, ປ່ຽນແປງໃໝ່ແບບວິທີຈັດຕັ້ງປະຕິບັດ ເພື່ອໃຫ້ແນວທາງອັນຖືກຕ້ອງ ກາຍເປັນໝາກຜົນລະອຽດໃນຊີວິດ.

#### 2) ພັກກອມມູນິດຈີນ

ວັນທີ 12 ມັງກອນ 2026, ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່ຄະນະກໍາມະການສູນກາງພັກກອມມູນິດຈີນ, ປະທານປະເທດ, ປະທານຄະນະກໍາມະການການທະຫານສູນກາງຈີນ ໄດ້ກ່າວຄໍາປາໄສໃນກອງປະຊຸມຄົບຄະນະຄັ້ງທີ 5 ຂອງຄະນະກວດກາສູນກາງພັກກອມມູນິດຈີນ ສະໄໝທີ XX, ໂດຍໄດ້ເນັ້ນໜັກວ່າ: ຕ້ອງຍຶດໝັ້ນ ແລະ ເພີ່ມທະວີການນໍາພາຮອບດ້ານຂອງພັກ, ຊຸກຍູ້ການຄຸ້ມຄອງພັກຢ່າງຮອບດ້ານ ແລະ ເຂັ້ມງວດດ້ວຍມາດຕະຖານທີ່ສູງກວ່າເກົ່າ ແລະ ມາດຕະການແທ້ຈິງກວ່າເກົ່າ; ຊຸກຍູ້ການຕໍ່ສູ້ຕ້ານການສໍ້ລາດບັງຫຼວງຢ່າງມີສະຕິ ແລະ ເດັດຂາດກວ່າເກົ່າ ຮັບປະກັນການບັນລຸໜ້າທີ່ເປົ້າໝາຍໃນ "ແຜນພັດທະນາ 5 ປີ ຄັ້ງທີ XV " ທີ່ເປັນປັດໄຈສໍາຄັນໃນການບັນລຸຄວາມທັນສະໄໝສັງຄົມນິຍົມຂັ້ນພື້ນຖານ.

ວັນທີ 20 ມັງກອນ 2026, ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ໄດ້ຈັດກອງປະຊຸມສໍາມະນາສໍາລັບການນໍາຫຼັກແຫຼ່ງ ຂອງກະຊວງ ແລະ ແຂວງ ເພື່ອຜັນຂະຫຍາຍຈິດໃຈກອງປະຊຸມຄົບຄະນະ ຄັ້ງທີ 04 ຂອງຄະນະກໍາມະການສູນກາງພັກຄອມມູນິດຈີນ ສະໄໝທີ XX ຢູ່ທີ່ໂຮງຮຽນພັກສູນກາງ. ໂດຍການເຂົ້າຮ່ວມກ່າວເປີດພິທີຂອງ ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່ ຄະນະກໍາມະການສູນກາງພັກຄອມມູນິດຈີນ, ປະທານປະເທດ, ປະທານຄະນະກໍາມະການການທະຫານສູນກາງຈີນ ໂດຍໄດ້ເນັ້ນໜັກເຖິງຄວາມຈໍາເປັນ ທີ່ຕ້ອງນໍາພາການເຊື່ອມຊຶມ ແລະ ຜັນຂະຫຍາຍຈິດໃຈກອງປະຊຸມຄົບຄະນະ ຄັ້ງທີ 04 ຂອງຄະນະກໍາມະການສູນກາງພັກຄອມມູນິດຈີນ ສະໄໝທີ XX

ໃຫ້ເຂົ້າສູ່ລວງເລິກຢ່າງບໍ່ຢຸດຢັ້ງ, ສ້າງແນວຄິດໃຫ້ເປັນເອກະພາບກັນ ແລະ ເຕົ້າໂຮມກຳລັງແຮງໃຫ້ດີກວ່າເກົ່າ, ປະຕິບັດວຽກງານທັງໝົດຢ່າງໜັກແໜ້ນ ພາຍໃຕ້ການນຳພາ-ຊີ້ນຳທີ່ເຂັ້ມແຂງຂອງສູນກາງພັກ ເພື່ອພະຍາຍາມບັນລຸສະພາບການເລີ່ມຕົ້ນທີ່ດີ ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 05 ປີ ຄັ້ງທີ 15.

**3) ພັກກອມມູນິດກູບາ**

ໃນລະຫວ່າງວັນທີ 01-02 ມັງກອນ 2026, ຜູ້ນຳພັກ ແລະ ລັດຖະບານກູບາ ນຳໂດຍ ສະຫາຍ Miguel Díaz-Canel Bermúdez, ເລຂາທິການທີ່ໜຶ່ງ ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ແຫ່ງ ສ.ກູບາ ໄດ້ຈັດພິທີສະເຫຼີມສະຫຼອງວັນຊາດຄົບຮອບ 67 ປີ (ວັນທີ 01 ມັງກອນ 1959 – 1 ມັງກອນ 2026) ແຫ່ງໄຊຊະນະຂອງການປະຕິວັດກູບາ. ພ້ອມນີ້, ຍັງໄດ້ຮັບສານອວຍພອນຈາກ ບັນດາພັກການເມືອງຕ່າງປະເທດ ແລະ ອົງການຈັດຕັ້ງຕ່າງໆໃນຂົງເຂດອາເມຣິກາລາຕິນ ແລະ ກາຣິບຽນເອີຣົບ, ອາເມຣິກາ, ອາຟຣິກາ ແລະ ອາຊີ ທີ່ໄດ້ຊົມເຊີຍຢ່າງຈິງໃຈມາຍັງເລຂາທິການທີ່ໜຶ່ງຄະນະບໍລິຫານງານສູນກາງພັກ, ປະທານປະເທດ ແຫ່ງ ສ.ກູບາ ແລະ ປະຊາຊົນກູບາ ໃນການຕໍ່ສູ້ເພື່ອອະທິປະໄຕ ແລະ ຄວາມຍຸຕິທຳທາງສັງຄົມ.

ວັນທີ 09 ມັງກອນ 2026, ສະຫາຍ Miguel Díaz-Canel Bermúdez, ເລຂາທິການທີ່ໜຶ່ງ ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ແຫ່ງ ສ.ກູບາ ແລະ ພ້ອມດ້ວຍບັນດາກົມການເມືອງ ແລະ ຄະນະເລຂາທິການອົງການຈັດຕັ້ງສູນກາງພັກ ໄດ້ເຂົ້າຮ່ວມກອງປະຊຸມໃຫຍ່ຄົບຄະນະພິເສດຂອງ ຄະນະບໍລິຫານງານສູນກາງພັກກອມມູນິດກູບາ ຈັດຂຶ້ນທີ່ ແຂວງກຣັງມາ ແລະ ແຂວງໂຮນກິນ. ກອງປະຊຸມ ໄດ້ສຸມໃສ່ວຽກບຸລິມະສິດຂອງຊາດ ເປັນຕົ້ນແມ່ນການສ້າງສາພັດທະນາເສດຖະກິດ-ສັງຄົມ, ສືບຕໍ່ເສີມສ້າງຄວາມພ້ອມຂອງຕົນ ສຳລັບການປ້ອງກັນປະເທດຊາດໃນທຸກຂັ້ນ, ເພີ່ມການຜະລິດສະບຽງອາຫານພາຍໃນປະເທດ ໃຫ້ຫຼາຍຂຶ້ນ ເພື່ອແກ້ໄຂຄວາມຕ້ອງ ການຂອງປະຊາກອນໃຫ້ພຽງພໍ, ນຳໃຊ້ວິທະຍາສາດເຂົ້າໃນຂະແໜງກະສິກຳ, ສຸມແນວຄວາມຄິດ ແລະ ວິທີການເຮັດວຽກສຳລັບປີ 2026 ເຊັ່ນ: ກົດລະບຽບຂອງພັກ, ການກະກຽມພະນັກງານ, ການພັດທະນາ 03 ເສົາຄ້ຳຂອງພັກ-ລັດ, ວິທະຍາສາດ ແລະ ນະວັດຕະກຳການສື່ສານທາງດ້ານການເມືອງ, ສະຖາບັນສັງຄົມ, ການຫັນປ່ຽນດິຈິຕອນ ແລະ ການ ນຳໃຊ້ປັນຍາປະດິດ, ການຄຸ້ມຄອງປະຊາຊົນ ແລະ ອື່ນໆ. ພ້ອມດຽວກັນ ກໍ່ໄດ້ສະແດງຄວາມເຄົາລົບນັບຖື ຕໍ່ວິລະຊົນຂອງກູບາໃນການປົກປ້ອງອະທິປະໄຕຂອງ ເວເນຊູເອລາ ແລະ ຊົມເຊີຍຄວາມກ້າຫານຂອງປະຊາຊົນກູບາ ທຸກຮຸ່ນຄົນ.

## 2. ພາກພື້ນອາຊີ-ປາຊີຟິກ ແລະ ອາຟຣິກາ

**ບັນຫາຊາຍແດນ ລະຫວ່າງ ໄທ ແລະ ກຳປູເຈຍ:** ປັດຈຸບັນ ແມ່ນຢູ່ໃນໄລຍະຢຸດຍິງ ທີ່ສອງຝ່າຍ ໄດ້ລົງນາມຮ່ວມກັນຕັ້ງແຕ່ວັນທີ 27 ທັນວາ 2025 ເປັນຕົ້ນມາ, ສ່ວນວ່າເຫດການລູກປືນໃຫຍ່ຕົກໃສ່ ແຂວງອຸບົນຣາຊະທານີຂອງໄທ ໃນວັນທີ 06 ມັງກອນ 2026 ຜ່ານມາ ແມ່ນຄວາມຜິດພາດທາງເຕັກນິກຂອງ ກຳປູເຈຍ ບໍ່ແມ່ນຄວາມຕັ້ງໃຈລະເມີດສັນຍາຢຸດຍິງແຕ່ຢ່າງໃດ. ເຖິງຢ່າງໃດກໍຕາມ, ກຳປູເຈຍກ່າວວ່າ ບຸລິມະສິດຫຼັກຄື ຮັກສາສັນຍາຢຸດຍິງ, ການສົ່ງຜູ້ອົບພະຍົບກັບປະເທດ ແລະ ການເລັ່ງປັກຫຼັກໝາຍເຂດແດນ, ສ່ວນໄທ ກ່າວວ່າ ສະຖານະການ ຍັງຢູ່ໃນສະຖານະຫໍ່ແຫຼມ ແຕ່ຢືນຢັນຈະປະຕິບັດຕາມສັນຍາຢຸດຍິງຢ່າງເຄັ່ງຄັດ ແລະ ພະຍາຍາມຟື້ນຟູຄວາມໄວ້ເນື້ອເຊື່ອໃຈສອງຝ່າຍ. ສ່ວນແຜນຈະຈັດກອງປະຊຸມຄະນະກຳມະການຊາຍແດນທົ່ວໄປ (JBC) ໃນເດືອນມັງກອນ 2026 ແມ່ນຖືກເລື່ອນອອກໄປກ່ອນ ຍ້ອນທາງການໄທ ສຸມໃສ່ການເລືອກຕັ້ງລັດຖະບານໃໝ່ ໃນເດືອນກຸມພາ 2026. ຂະນະທີ່ ສ.ອາເມຣິກາ ມອບເງິນຊ່ວຍເຫຼືອຈຳນວນ 45 ລ້ານໂດລາສະຫະລັດ ໃຫ້ ກຳປູເຈຍ ແລະ ໄທ ເພື່ອເສີມສ້າງຄວາມເຂັ້ມແຂງໃຫ້ແກ່ສັນຍາຢຸດຍິງ ໃນນັ້ນມີ ການສ້າງສະຖຽນລະພາບຕາມຊາຍແດນ, ການຟື້ນຟູຊຸມຊົນ ແລະ ຊ່ວຍເຫຼືອຜູ້ອົບພະຍົບ; ເກັບກູ້ລະເບີດຕາມຊາຍແດນ; ຕໍ່ຕ້ານຂະບວນການສໍ້ໂກງອອນລາຍ ແລະ ການຄ້າຢາເສບຕິດຂ້າມຊາຍແດນ.

**ການເມືອງມຽນມາ:** ໃນວັນທີ 26 ມັງກອນ 2026, ພັກສະຫະພາບສາມັກຄີ ແລະ ການພັດທະນາ (USDP) ຊຶ່ງເປັນພັກການເມືອງຫຼັກ ທີ່ໄດ້ຮັບການສະໜັບສະໜູນ ໂດຍກອງທັບມຽນມາ ໄດ້ປະກາດໄຊຊະນະໃນການເລືອກຕັ້ງຢ່າງເປັນທາງການ ໂດຍໄດ້ຮັບສຽງສ່ວນຫຼາຍ ທີ່ສາມາດຈັດຕັ້ງລັດຖະບານໃໝ່ໄດ້ ຫຼັງຈາກການປ່ອນບັດໄລຍະທີ 03 ຊຶ່ງເປັນໄລຍະສຸດທ້າຍ ໄດ້ສິ້ນສຸດລົງໃນວັນທີ 25 ມັງກອນ 2026, ການເລືອກຕັ້ງຄັ້ງນີ້ ເປັນຄັ້ງທຳອິດ ນັບແຕ່ກອງທັບ ໄດ້ເຮັດລັດຖະປະຫານຍຶດອຳນາດ ໃນປີ 2021. ການເລືອກຕັ້ງຄັ້ງນີ້ ຖືກວິພາກວິຈານຢ່າງໜັກ ຈາກອົງການສະຫະປະຊາຊາດ (UN), ບັນດາປະເທດຕາເວັນຕົກ ແລະ ກຸ່ມສິດທິມະນຸດ ກ່າວຫາວ່າ ເປັນພຽງກົນອຸບາຍ ທີ່

ເຮັດໃຫ້ການປົກຄອງ ຂອງທະຫານຖືກຕ້ອງຕາມກົດໝາຍ ຜ່ານຕົວແທນທາງການເມືອງ ຊຶ່ງເປັນຂໍ້ກ່າວຫາ ທີ່ລັດຖະບານທະຫານ ປະຕິເສດ.

**ສະພາບແຫຼມເກົາຫຼີ:** ວັນທີ 26 ມັງກອນ 2026, ສະຫາຍ ກິມ ເຈິງ ອຸນ, ເລຂາທິການໃຫຍ່ພັກແຮງງານເກົາຫຼີ ໄດ້ສົ່ງໂທລະເລກຊົມເຊີຍ ເຖິງ ສະຫາຍ ໂຕ ເລິມ, ເນື່ອງໃນໂອກາດທີ່ໄດ້ຮັບເລືອກຕັ້ງໃຫ້ດຳລົງຕຳແໜ່ງເປັນເລຂາທິການໃຫຍ່ ພັກກອມມູນິດຫວຽດນາມ ສະໄໝທີ XIV, ຊຶ່ງເນື້ອໃນໂທລະເລກອວຍພອນ ລະບຸວ່າ ການທີ່ສະຫາຍ ໄດ້ຮັບຕຳແໜ່ງເປັນເລຂາທິການໃຫຍ່ພັກກອມມູນິດຫວຽດນາມ ອີກສະໄໝໜຶ່ງ ສະແດງໃຫ້ເຫັນເຖິງຄວາມໄວ້ເນື້ອເຊື່ອໃຈຢ່າງເລິກເຊິ່ງ ຂອງບັນດາສະມາຊິກພັກ ແລະ ປະຊາຊົນຫວຽດນາມ, ເຊື່ອໝັ້ນວ່າ ສາຍພົວພັນມິດຕະພາບທີ່ເປັນມູນເຊື້ອ ແລະ ການຮ່ວມມື ລະຫວ່າງ ສອງພັກ ແລະ ສອງປະເທດ ສປປ ເກົາຫຼີ-ສສ ຫວຽດນາມທີ່ມີປະຫວັດສາດ ແລະ ຮີດຄອງປະເພນີອັນຍາວນານ ຈະໄດ້ຮັບການເສີມຂະຫຍາຍ ແລະ ພັດທະນາຢ່າງຕັ້ງໜ້າ ເຂົ້າໃນທຸກຂົງເຂດ ແລະ ຍິນດີຮ່ວມກັນ ໃນການຈັດຕັ້ງຜັນຂະຫຍາຍບັນດາຂໍ້ຕົກລົງ ໄດ້ທີ່ບັນລຸ ໃນທ້າຍປີ 2025 ຜ່ານມາໃນໂອກາດ ທີ່ສະຫາຍ ໄດ້ມາຢ້ຽມຢາມ ສປປ ເກົາຫຼີ.

**ການເມືອງຍີ່ປຸ່ນ:** ວັນທີ 23 ມັງກອນ 2026, ທ່ານ ນາງ ທະຄະອິຊິ ຊະນະເອະ, ນາຍົກລັດຖະມົນຕີຍີ່ປຸ່ນ ໄດ້ຕັດສິນໃຈຍຸບສະພາຕ່ຳ ໃນກອງປະຊຸມຄະນະລັດຖະບານຍີ່ປຸ່ນ. ນັກວິເຄາະເຫັນວ່າ: ຈຸດປະສົງຕົ້ນຕໍ ຍ້ອນເຫັນວ່າພັກຂອງຕົນມີຖານສຽງສະໜັບສະໜູນສູງ ຊຶ່ງຈະເປັນໂອກາດໃຫ້ພັກ ຍາດໄດ້ບ່ອນນັ່ງໃນສະພາ ຫຼາຍກວ່າປັດຈຸບັນ. ລັດຖະທຳມະນູນຍີ່ປຸ່ນລະບຸວ່າ: ສະພາຕ່ຳ ຕ້ອງຮຽກໄຂກອງປະຊຸມສະພາ ພາຍໃນເວລາ 30 ວັນ ຫຼັງຈາກການເລືອກຕັ້ງສະພາຕ່ຳ ໂດຍຄາດວ່າການເລືອກສະມາຊິກສະພາຕ່ຳ ຈະຈັດຂຶ້ນໃນວັນທີ 08 ກຸມພາ 2026 ເພື່ອຈັດການເລືອກຕັ້ງນາຍົກລັດຖະມົນຕີ ດ້ວຍການບົ່ງຕົວແຕ່ງຕັ້ງ.

## 3. ພາກພື້ນເອີຣົບ-ອາເມຣິກາ

**ບັນຫາຄວາມຂັດແຍ່ງ ລະຫວ່າງ ອູແກຣນ ແລະ ຣັດເຊຍ:** ສອງຝ່າຍ ຍັງສືບຕໍ່ໂຈມຕີກັນຢ່າງຮຸນແຮງ, ຣັດເຊຍໄດ້ໃຊ້ໂດຣນຫຼາຍຮ້ອຍລຳ ແລະ ລູກສອນໄຟຄວາມໄວເໜືອສຽງ Oreshnik ໂຈມຕີພື້ນທີ່ທາງທິດຕາເວັນຕົກຂອງອູແກຣນ ເຮັດໃຫ້ລະບົບໄຟຟ້າ-ນ້ຳປະປາ ໄດ້ຮັບຄວາມເສຍຫາຍຢ່າງໜັກ, ປະຊາຊົນອູແກຣນ ຫຼາຍແສນຄົນ ຕ້ອງປະສົບກັບບັນຫາຂາດແຄນນ້ຳປະປາ ແລະ ໄຟຟ້າ ທ່າມກາງສະພາບອາກາດທີ່ໜາວຈັດ. ສ່ວນອູແກຣນ ໄດ້ໂຈມຕີສາງນ້ຳມັນ ແລະ ສາງເກັບອາວຸດຂອງຣັດເຊຍ ໃນເມືອງ Belgorod ແລະ ເມືອງຍຸດທະສາດອື່ນໆ. ໃນວັນທີ 12 ມັງກອນ 2026, ກອງປະຊຸມສຸກເສີນ ສະພາຄວາມໝັ້ນຄົງ ແຫ່ງອົງການສະຫະປະຊາຊາດ (UNSC), ໄດ້ຄັດຄ້ານການນຳໃຊ້ລູກສອນໄຟ Oreshnik ເປັນຄັ້ງທີສອງຂອງຣັດເຊຍ ທີໂຈມຕີອູແກຣນ ໃກ້ຊາຍແດນສະໂລວາກີ, ໂຣມານີ ແລະ ໂປໂລຍ (ສະມາຊິກນາໂຕ້) ຊຶ່ງເປັນການຍົກລະດັບຄວາມຮຸນແຮງຄວາມຂັດແຍ່ງ. ຂະນະດຽວກັນ ບັນດາປະເທດຕາເວັນຕົກ ຍັງສືບຕໍ່ສະໜັບສະໜູນດ້ານປ້ອງກັນປະເທດ ໃຫ້ແກ່ອູແກຣນ ໂດຍສະເພາະ ແມ່ນດ້ານເງິນທຶນ, ອາວຸດ, ລະບົບປ້ອງກັນໄພທາງອາກາດ ແລະ ຂວ້ຳບາດຣັດເຊຍ ຢ່າງຕໍ່ເນື່ອງ. ສ່ວນຣັດເຊຍ ໄດ້ຮ່ວມມືດ້ານການທະຫານກັບຫຼາຍປະເທດ, ໂດຍໃນວັນທີ 10-16 ມັງກອນ 2026, ສປ ຈີນ, ຣັດເຊຍ, ອີຣານ ແລະ ອາຟຣິກາໃຕ້ ໄດ້ຝຶກຊ້ອມຮົບຮ່ວມກັນທາງທະເລ ໃນຫົວຂໍ້ Will For Peace 2026 ໃນນ່ານນ້ຳຂອງ ອາຟຣິກາໃຕ້, ໂດຍມີປະເທດສັງເກດການຈາກ ເອຢິບ, ເອທີໂອປີ ແລະ ບຣາຊິນ.

**ສະພາບຄວາມເຄັ່ງຕຶງ ລະຫວ່າງ ສ.ອາເມຣິກາ ແລະ ເວເນຊູເອລາ:** ວັນທີ 03 ມັງກອນ 2026, ໂດນັນ ທຣຳປະທານາທິບໍດີ ສ.ອາເມຣິກາ ໄດ້ເປີດປະຕິບັດການໂຈມຕີເປົ້າໝາຍໃນນະຄອນຫຼວງກາຣາກັສ, ເວເນຊູເອລາ ແລະ ສັ່ງໃຫ້ໜ່ວຍຮົບພິເສດບຸກຈັບ ປະທານາທິບໍດີ ນິໂກລັສ ມາດູໂຣ ພ້ອມດ້ວຍພັນລະຍາ ເພື່ອສົ່ງຕົວໄປຄຸມຂັງ ທີ່ແມັດໂທຣໂພລິແທນ (Metropolitan Detention Center) ໃນເຂດບຣຸກລິນ, ນິວຢອກ.

ຂະນະທີ່ ທ່ານ ທຣຳ ໄດ້ອອກຖະແຫຼງການຢືນຢັນວ່າ ກອງທັບ ສ.ອາເມຣິກາ ໄດ້ປະສົບຜົນສຳເລັດປະຕິບັດການໃຫຍ່ຄັ້ງນີ້ ແລະ ປະກາດວ່າ ສ.ອາເມຣິກາ ຈະເຂົ້າໄປບໍລິຫານເວເນຊູເອລາ ຈົນກວ່າຈະມີການຖ່າຍໂອນອຳນາດທີ່ປອດໄພ ແລະ ເໝາະສົມ, ນອກນັ້ນ ທ່ານ ຍັງກ່າວຕື່ມວ່າ ຈະໃຫ້ບໍລິສັດນ້ຳມັນຂອງ ສ.ອາເມຣິກາ ເຂົ້າໄປບໍລິຫານໃນເວເນຊູເອລາ ຊຶ່ງເປັນປະເທດທີ່ມີປະລິມານນ້ຳມັນສຳຮອງຫຼາຍທີ່ສຸດໃນໂລກ. ຂະນະດຽວກັນ, ສານປະຊາຊົນສູງສຸດເວເນຊູເອລາ ໄດ້ປະກາດແຕ່ງຕັ້ງ ທ່ານ ນາງ ເດລຊີ ໂຣດຣິເກສ (Delcy Rodríguez), ຮອງປະທານາທິບໍດີເວເນຊູເອລາ ເປັນປະທານາທິບໍດີຊົ່ວຄາວ ຢ່າງເປັນທາງການ ໃນໄລຍະການດຳລົງຕຳແໜ່ງ 2026-2031, ພາຍຫຼັງເຂົ້າ

ຮັບຕໍາແໜ່ງ ທ່ານ ໄດ້ຮຽກຮ້ອງໃຫ້ກໍາລັງທະຫານ, ປະຊາຊົນອອກມາປົກປ້ອງປະເທດ ແລະ ສືບຕໍ່ພົວພັນຮ່ວມກັບເພື່ອນມິດສາກົນໃນທຸກຂົງເຂດ, ໂດຍສະເພາະ ສ.ກູບາ, ນິກາຣາກວາ, ຣັດເຊຍ, ສປ ຈີນ ແລະ ປະເທດອື່ນໆ.

ເຫດການດັ່ງກ່າວ, ເຮັດໃຫ້ເກີດສຽງວິພາກວິຈານຢ່າງກວ້າງຂວາງ, ເວເນຊູເອລາ ກໍໄດ້ປະນາມວ່າ ເປັນການລັກພາຕົວ ແລະ ຮຽກຮ້ອງໃຫ້ປ່ອຍຕົວ ທ່ານ ມາດູໂຣ ແລະ ພັນລະຍາໂດຍດ່ວນ. ພ້ອມທັງກ່າວວ່າ ທາດແທ້ຂອງການກະທໍາ ສ.ອາເມຣິກາ ແມ່ນຕ້ອງການຍຶດຄອງຊັບພະຍາກອນນໍ້າມັນ ແລະ ແຮ່ທາດ ໂດຍໃຊ້ຂໍ້ອ້າງເລື່ອງຢາເສບຕິດ; ສະຫະປະຊາຊາດ ສະແດງກັງວົນຢ່າງຍິ່ງ ຕໍ່ການໃຊ້ກໍາລັງທາງທະຫານຂອງ ສ.ອາເມຣິກາ ຊຶ່ງເປັນແບບຢ່າງທີ່ອັນຕະລາຍ, ຮຽກຮ້ອງໃຫ້ເຄົາລົບກົດໝາຍລະຫວ່າງປະເທດ ແລະ ກົດບັດສະຫະປະຊາຊາດ; ສປ ຈີນ, ຣັດເຊຍ, ບຣາຊິນ ແລະ ເມັກຊິກ ອອກມາປະນາມການລະເມີດອະທິປະໄຕຂອງເວເນຊູເອລາ ຢ່າງຮ້າຍແຮງ, ໂດຍຈີນຄັດຄ້ານຢ່າງໜັກແໜ້ນ ແລະ ຮຽກຮ້ອງໃຫ້ ສ.ອາເມຣິກາ ປະຕິບັດຕາມກົດໝາຍສາກົນ; ສະຫະພາບເອີຣົບ ກ່າວວ່າ ການແກ້ໄຂວິກິດການເມືອງ ຄວນຜ່ານຂະບວນການເຈລະຈາ ແລະ ວິທີທາງການທູດ ບໍ່ແມ່ນການໃຊ້ກໍາລັງທະຫານບຸກເຂົ້າຈັບກຸມຂ້າມແດນ ແລະ ສະແດງຄວາມກັງວົນວ່າ ການທີ່ ສ.ອາເມຣິກາ ບຸກເຂົ້າໄປໃນດິນແດນຂອງປະເທດທີ່ມີອະທິປະໄຕໂດຍບໍ່ມີມະຕິຮັບຮອງຈາກ ສປຊ ແມ່ນການລະເມີດກົດໝາຍສາກົນ ແລະ ສ້າງບັນທັດຖານທີ່ອັນຕະລາຍ.

**ລັດຖະບານ ສ.ອາເມຣິກາ ພາຍໃຕ້ການນໍາຂອງ ທ່ານ ທຣໍາ ປະກາດສ້າງຕັ້ງ ຄະນະກໍາມະການສັນຕິພາບ (Board of Peace)** ໃນກອງປະຊຸມ ເວທີປາໄສເສດຖະກິດໂລກ (WEF) ປະຈໍາປີ 2026 ທີ່ເມືອງ Davos, ປະເທດສະວິດ, ລະຫວ່າງວັນທີ 19-23 ມັງກອນ 2026, ທີ່ມີຈຸດປະສົງເພື່ອໃຫ້ເປັນອົງກອນສໍາລັບແກ້ໄຂຄວາມຂັດແຍ່ງລະຫວ່າງປະເທດ ໂດຍປະເທດທີ່ຖືກເຊີນເຂົ້າຮ່ວມສາມາດເລືອກເປັນສະມາຊິກຖາວອນໄດ້ ໂດຍການປະກອບສ່ວນເງິນຈໍານວນ 1 ຕື້ໂດລາສະຫະລັດ ສ່ວນສະມາຊິກທົ່ວໄປຈະຖືກພິຈາລະນາເປັນປີຕໍ່ປີ. ໃນເບື້ອງຕົ້ນມີແນວຄິດທີ່ຈະສ້າງຂຶ້ນ ເພື່ອເບິ່ງແຍງການຟື້ນຟູເຂດກາຊາ ຫຼັງຈາກສົງຄາມສິ້ນສຸດ, (ໃນກົດບັດ 11 ໜ້າທີ່ ບໍ່ໄດ້ກ່າວເຖິງບັນຫາເຂດກາຊາເລີຍ) ໄດ້ປ່ຽນຮູບແບບໄປສູ່ສິ່ງທີ່ມີຄວາມທະເຍີທະຍານຫຼາຍກວ່າເກົ່າ, ນອກນັ້ນ ທ່ານ ທຣໍາ ກ່າວວ່າ ໜ້າວຽກຂອງຄະນະກໍາມະການອາດຈະຂະຫຍາຍອອກໄປສູ່ການເບິ່ງແຍງວິກິດການອື່ນໆໃນທົ່ວໂລກ, ຊຶ່ງເປັນບົດບາດທີ່ຕາມປະເພນີແລ້ວ ແມ່ນໜ້າທີ່ຂອງສະຫະປະຊາຊາດ (UN). ປະເທດທີ່ລົງນາມເຂົ້າຮ່ວມ ມີປະມານ 25 ປະເທດ (ຈາກຈໍານວນທີ່ຖືກເຊີນທັງໝົດ 50-60 ປະເທດ), ກຸ່ມປະເທດອາຊີ ແລະ ເອີຣົບ: ຫວຽດນາມ, ອິນໂດເນເຊຍ, ປາກິດສະຖານ, ອາແຊກໄບຊານ, ກາຊັກສະຖານ, ອຸດສະເບກິດສະຖານ; ກຸ່ມປະເທດເອີຣົບ ແລະ ອື່ນໆ: ຮົງກາລີ, ຕວັກກີ, ອາກຊັງຕິນ, ອາກເມນີ, ໂກໂຊໂວ, ເບລາຣຸດຊີ; ກຸ່ມປະເທດຕາເວັນອອກກາງ ແລະ ອາຟຣິກາເໜືອ: ອາຣັບບີ ຊາອຸດິດ, ກາຕາ, ບາເຣນ, ເອເມຣັດ ອາຣັບ, ເອຢິບ, ຊອກດານີ, ກູເວດ, ມາຣົກ ແລະ ອິດສະຣາແອນ. ຣັດເຊຍ ຢູ່ໃນຂັ້ນຕອນພິຈາລະນາ ທີ່ຈະເຂົ້າຮ່ວມ, ສ່ວນປະເທດ ບໍ່ມີທ່າທີຕອບຮັບໄດ້ແກ່ ສປ ຈີນ, ອິນເດຍ, ຍີ່ປຸ່ນ ແລະ ໄທ. ຂະນະທີ່ ປະເທດມະຫາອໍານາດໃນເອີຣົບ ສ່ວນໃຫຍ່ປະຕິເສດການເຂົ້າຮ່ວມ: ອັງກິດ, ຝຣັ່ງ, ນອກແວ, ຊູແອດ ແລະ ສະໂລເວນີ.

**ຄວາມເຄັ່ງຕຶງລະຫວ່າງ ສ.ອາເມຣິກາ-ກຣີນແລນ:** ຄວາມຕ້ອງການຂອງລັດຖະບານ ສ.ອາເມຣິກາ ໃນການຄອບຄອງເກາະກຣີນແລນ ຂອງດານມາກ ໄດ້ກາຍມາເປັນຄວາມຂັດແຍ່ງອີກຄັ້ງ, ຊຶ່ງຫຼາຍປະເທດໃນກຸ່ມນາໂຕ້ ບໍ່ເຫັນດີກັບຄວາມປະສົງດັ່ງກ່າວ. ວັນທີ 17 ມັງກອນ 2026, ທ່ານ ທຣໍາ ຈຶ່ງໄດ້ປະກາດຈະເພີ່ມພາສີ 10% ຕໍ່ສິນຄ້າກັບ 08 ປະເທດ ຄື: ດານມາກ, ນອກແວ, ຊູແອັດ, ຝຣັ່ງ, ເຢຍລະມັນ, ອັງກິດ, ໂຮນລັງ ແລະ ແຟງລັງ ທີ່ສົ່ງໄປ ສ.ອາເມຣິກາ ຊຶ່ງຈະເລີ່ມປະຕິບັດໃນວັນທີ 01 ກຸມພາ 2026 ເປັນຕົ້ນໄປ, ຈາກນັ້ນຈະເພີ່ມຂຶ້ນເປັນ 25% ນັບແຕ່ວັນທີ 01 ມິຖຸນາ 2026 ເປັນຕົ້ນໄປ ຖ້າຫາກບໍ່ສາມາດບັນລຸຂໍ້ຕົກລົງ ກ່ຽວກັບ ເກາະກຣີນແລນ. ຂະນະດຽວກັນ ວັນທີ 22 ມັງກອນ 2026, ສະຫະພາບເອີຣົບ ໄດ້ຕອບໂຕ້ຄືນໂດຍການລະງັບການອະນຸມັດ ຂໍ້ຕົກລົງການຄ້າກັບ ສ.ອາເມຣິກາ ຈົນກວ່າສະຖານະການທາງດ້ານການເມືອງ ແລະ ສາຍພົວພັນ ລະຫວ່າງສອງຝ່າຍ ຈະມີຄວາມຊັດເຈນ. ພ້ອມດຽວກັນນີ້ 07 ປະເທດເອີຣົບ ໄດ້ຮ່ວມກັນສົ່ງກໍາລັງທະຫານໄປປະຈໍາ ຢູ່ເກາະກຣີນແລນ ເພື່ອກຽມພ້ອມຊ່ວຍດານມາກຮັບມື ກັບ ສ.ອາເມຣິກາ. ສ່ວນລັດຖະບານກຣີນແລນ ແລະ ດານມາກ ຢືນຢັນວ່າ ບໍ່ຕ້ອງການຂາຍເກາະກຣີນແລນ. ສ່ວນອາເມຣິກາ ຍັງຄົງພະຍາຍາມຕໍ່ລອງ ແລະ ຊອກຫາວິທີ ເພື່ອບັນລຸຈຸດປະສົງຂອງຕົນເອງ.

## 4. ພາກພື້ນຕາເວັນອອກກາງ

**ຄວາມຂັດແຍ່ງເຂດກາຊາ**: ໄລຍະເດືອນມັງກອນ ຜ່ານມາ, ເຖິງວ່າຈະມີການປະກາດຢຸດຍິງ ແຕ່ກອງທັບອິດສະຣາແອນ ກໍຍັງເພີ່ມທະວີການໂຈມຕີຢ່າງໜັກໜ່ວງ ໂດຍເປົ້າໝາຍແມ່ນກຸ່ມຮິດສ໌ບານເລາະ ແລະ ກຸ່ມຮາມາສ ຢູ່ຫຼາຍພື້ນທີ່ ໂດຍສະເພາະທາງພາກຕາເວັນອອກຂອງກາຊາ ໃນເຂດ Khan Younis ແລະ Rafah, ໂດຍອ້າງວ່າ ເປັນການກຳຈັດໄພຂົ່ມຂູ່ ທີ່ມີການລະເມີດຂໍ້ຕົກລົງຢ່າງຕໍ່ເນື່ອງ, ການໂຈມຕີນີ້ ເຮັດໃຫ້ພື້ນຖານໂຄງລ່າງ ທີ່ພັກອາໄສ ໃນບໍລິເວນດັ່ງກ່າວ ເສຍຫາຍຢ່າງໜັກໜ່ວງ.

ເພື່ອສືບຕໍ່ເງື່ອນໄຂສູ່ແຜນສັນຕິພາບ ໄລຍະ 02, ໃນວັນທີ 07 ມັງກອນ 2026, ກຸ່ມຮາມາສ ໄດ້ເລີ່ມພາລະກິດຄົ້ນຫາ ຕົວປະກັນຄົນ (ຜູ້ເສຍຊີວິດ) ທີ່ຍັງຕົກຄ້າງຢູ່ໃນເຂດກາຊາ ໂດຍມີເຈົ້າໜ້າທີ່ກາແດງສາກົນ ຕິດຕາມໃນຖານະຄົນກາງ ແລະ ທະຫານອິດສະຣາແອນ ສັງເກດການ, ພາລະກິດຄັ້ງນີ້ ບໍ່ພຽງແຕ່ເປັນການຄົ້ນຫາຜູ້ເສຍຊີວິດ ແຕ່ອາດເປັນເງື່ອນໄຂຍຸດທະສາດທີ່ສຳຄັນ ໃນການເປີດດ່ານຣາຟາ (Rafah) ເພາະເປັນເສັ້ນທາງຫຼັກໃນການຮັບເຄື່ອງຊ່ວຍເຫຼືອ ແລະ ການເດີນທາງຂອງປະຊາຊົນໃນເຂດກາຊາ ຂະນະທີ່ ບັນດາປະເທດ ລວມທັງກຸ່ມປະເທດອາຣັບ ໄດ້ຮຽກຮ້ອງໃຫ້ອິດສະຣາແອນ ເປີດທາງໃຫ້ອົງການຈັດຕັ້ງສາກົນ ເຂົ້າໄປຊ່ວຍເຫຼືອຜູ້ປະສົບໄພ ໂດຍບໍ່ມີເງື່ອນໄຂ ເນື່ອງຈາກມີພາຍຸບວກກັບຝົນຕົກໜັກ ເຮັດໃຫ້ນ້ຳທະເລເພີ່ມຂຶ້ນພາໃຫ້ເກີດນ້ຳຖ້ວມກະທັນຫັນໃນຫຼາຍພື້ນທີ່ ໂດຍສະເພາະເຂດທີ່ພັກອາໄສຊົ່ວຄາວ ຂອງຜູ້ອົບພະຍົບໃນເຂດ Al Mawasi (Khan Younis), ເຮັດໃຫ້ປະຊາຊົນຕ້ອງປະເຊີນກັບຄວາມໜາວເຢັນ ແລະ ຂາດທີ່ຢູ່ອາໄສທີ່ອົບອຸ່ນ.

ປັດຈຸບັນ ກອງທັບອິດສະຣາແອນ ຍັງຄວບຄຸມພື້ນທີ່ຫຼາຍກວ່າ 58% ຂອງເຂດກາຊາ ໂດຍເສັ້ນແບ່ງເຂດແດນທີ່ເອີ້ນວ່າ ເສັ້ນສີເຫຼືອງ (Yellow Line), ພື້ນທີ່ທາງເໜືອ ແລະ ທາງຕາເວັນອອກຂອງເສັ້ນນີ້ ຢູ່ພາຍໃຕ້ການຄວບຄຸມທາງທະຫານຢ່າງເຂັ້ມງວດ. ພ້ອມດຽວກັນນີ້, ອິດສະຣາແອນ ໄດ້ອອກມາເຕືອນເປັນຄັ້ງສຸດທ້າຍ ໃຫ້ກຸ່ມຮາມາສຕ້ອງວາງອາວຸດພາຍໃນ 02 ເດືອນ ພາຍໃຕ້ເງື່ອນໄຂຂອງການຢຸດຍິງໄລຍະໃໝ່. ເຖິງຢ່າງໃດກໍຕາມ, ບັນຫາການປົດອາວຸດ ແລະ ຮູບແບບການປົກຄອງຫຼັງສົງຄາມ ຍັງເປັນຈຸດຂັດແຍ່ງຫຼັກ ທີ່ເຮັດໃຫ້ການເຈລະຈາບໍ່ມີຄວາມຄືບໜ້າ.

**ສະຖານະການປະທ້ວງໃນອີຣານ:** ໃນວັນທີ 28 ທັນວາ 2025, ປະຊາຊົນອີຣານ ໄດ້ລວມຕົວປະທ້ວງ ເລີ່ມຈາກຄວາມບໍ່ພໍໃຈຂອງຊາວຄ້າຂາຍ ຢູ່ນະຄອນຫຼວງເຕຣາຣານ ແຜ່ລາມໄປສູ່ປະຊາຊົນ ເນື່ອງຈາກຄວາມບໍ່ພໍໃຈທາງດ້ານເສດຖະກິດ, ອັດຕາເງິນເຟີ້ ແລະ ຄ່າຄອງຊີບສູງ ຈົນນຳໄປສູ່ການຮຽກຮ້ອງທາງການເມືອງ, ການປະທ້ວງໄດ້ຂະຫຍາຍຕົວໄປໃນ 25 ຕົວເມືອງ ໂດຍສະເພາະພາກຕາເວັນຕົກ ແລະ ຕາເວັນອອກສ່ຽງໃຕ້ ຜູ້ປະທ້ວງໄດ້ທຳລາຍຊັບສິນ ແລະ ປະທະກັບເຈົ້າໜ້າທີ່ຢ່າງຮຸນແຮງ. ວັນທີ 12 ມັງກອນ 2026, ທ່ານ Seyed Abbas Araghchi, ລັດຖະມົນຕີຕ່າງປະເທດອີຣານ ໄດ້ປະກາດວ່າ ອີຣານ ສາມາດຄວບຄຸມສະພາບການປະທ້ວງ ໄດ້ຢ່າງສົມບູນແລ້ວ ແລະ ກ່າວຫາວ່າ ສ.ອາເມຣິກາ ເປັນຜູ້ຢູ່ເບື້ອງຫຼັງເຫດການໃນຄັ້ງນີ້ ຈົນກາຍເປັນຄວາມຮຸນແຮງ ແລະ ນອງເລືອດ ເຮັດໃຫ້ເຈົ້າໜ້າທີ່ເສຍຊີວິດ 111 ຄົນ, ກຸ່ມຜູ້ປະທ້ວງເສຍຊີວິດ ປະມານ 3,000 ຄົນ. ສ່ວນປະທານາທິບໍດີ ສ.ອາເມຣິກາ ໄດ້ຖະແຫຼງວ່າ ຍັງຈະບໍ່ເຂົ້າໂຈມຕີອີຣານ ຍ້ອນລັດຖະບານອີຣານ ສາມາດຄວບຄຸມສະຖານະການໄດ້ແລ້ວ ແລະ ບໍ່ມີການສັງຫານຜູ້ປະທ້ວງ.

## II. ການເຄື່ອນໄຫວຂອງ ການນຳຂັ້ນສູງ

**1) ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ແລະ ຊົມເຊີຍຂອງ ຜູ້ຕາງໜ້າພິເສດຂອງ ສູນກາງພັກກອມມູນິດຫວຽດນາມ**



ວັນທີ 8 ມັງກອນ 2026, ທີ່ຫ້ອງວ່າການສູນກາງພັກ, ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ແຫ່ງ ສປປ ລາວ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ສະຫາຍ ເລ ຮວາຍ ຈຸງ, ເລຂາທິການສູນກາງພັກ, ລັດຖະມົນຕີກະຊວງການຕ່າງປະເທດ, ຜູ້ຕາງໜ້າພິເສດຂອງ ສະຫາຍ ໂຕເລິມ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ພ້ອມດ້ວຍຄະນະຜູ້ແທນຂອງ ສູນກາງພັກກອມມູນິດຫວຽດນາມ ທີ່ເດີນທາງມາຊົມເຊີຍຜົນສໍາເລັດກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ. ສະຫາຍເລຂາທິການໃຫຍ່ ທອງລຸນ ສີສຸລິດ, ໄດ້ຕີລາຄາສູງ ແລະ ສະແດງຄວາມຂອບໃຈຢ່າງຈິງໃຈໄປຍັງ ສູນກາງພັກກອມມູນິດຫວຽດນາມ ແລະ ສະຫາຍເລຂາທິການໃຫຍ່ ໂຕ ເລິມ ທີ່ໄດ້ແຕ່ງຕັ້ງ ຜູ້ຕາງໜ້າພິເສດ ທີ່ໄດ້ໃຫ້ການສະໜັບສະໜູນ ແລະ ສົ່ງສານອວຍພອນຊົມເຊີຍຜົນສໍາເລັດ ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ ໃນຄັ້ງນີ້ ທີ່ໄດ້ຮັບຜົນສໍາເລັດຢ່າງຈົບງາມ. ການມາອວຍພອນຊົມເຊີຍຜົນສໍາເລັດກອງປະຊຸມໃຫຍ່ຄັ້ງນີ້ ຖືເປັນຄະນະຜູ້ແທນຕ່າງປະເທດທໍາອິດ ເຊິ່ງເປັນການສະແດງໃຫ້ເຫັນເຖິງຄວາມເອົາໃຈໃສ່ ແລະ ຖືສໍາຄັນຂອງ ພັກກອມມູນິດຫວຽດນາມ ແລະ ປະຊາຊົນຫວຽດນາມອ້າຍນ້ອງ ທີ່ມີຕໍ່ພັກ ແລະ ປະຊາຊົນລາວບັນດາເຜົ່າ ກໍຄືສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ, ການຮ່ວມມືຮອບດ້ານ ແລະ ຫຸ້ນສ່ວນຍຸດທະສາດ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ. ສະຫາຍ ທອງລຸນ ສີສຸລິດ ໄດ້ແຈ້ງໃຫ້ຊາບໂດຍສັງເຂບ ກ່ຽວກັບຜົນສໍາເລັດ ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງ ພັກປະຊາຊົນປະຕິວັດລາວ ທີ່ເປັນເຫດການປະຫວັດສາດທາງດ້ານການເມືອງ-ສັງຄົມ ອັນສໍາຄັນຍິ່ງ ຂອງ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ເຊິ່ງໄດ້ດໍາເນີນຢ່າງຖືກຕ້ອງ ຕາມກົດລະບຽບຂອງພັກ ແລະ ຖືວ່າໄດ້ຮັບຜົນສໍາເລັດຢ່າງຈົບງາມ.

ສະຫາຍ ເລ ຮວາຍ ຈຸງ ຕາງໜ້າໃຫ້ ສະຫາຍເລຂາທິການໃຫຍ່ ໂຕ ເລິມ ແລະ ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ສະແດງຄວາມຊົມເຊີຍ ສະຫາຍ ທອງລຸນ ສີສຸລິດ ທີ່ໄດ້ຮັບເລືອກຕັ້ງໃຫ້ດໍາລົງຕໍາແໜ່ງ ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ ອີກໜຶ່ງສະໄໝ ເຊິ່ງສະແດງໃຫ້ເຫັນເຖິງຄວາມໄວ້ວາງໃຈຢ່າງເລິກເຊິ່ງຂອງທົ່ວພັກ, ທົ່ວກອງທັບ ແລະ ທົ່ວປວງຊົນລາວ ຕໍ່ການປະກອບສ່ວນອັນໃຫຍ່ຫຼວງ, ສະຕິປັນຍາ ແລະ ຄວາມມຸ້ງມາດປາຖະໜາຂອງ ສະຫາຍເລຂາທິການໃຫຍ່ ຕະຫຼອດໄລຍະທີ່ຜ່ານມາ ແລະ ຊົມເຊີຍຜົນສໍາເລັດ ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງ ພັກປະຊາຊົນປະຕິວັດລາວ ເຊິ່ງເປັນເຫດການເມືອງທີ່ສໍາຄັນ, ມີຄວາມໝາຍເລິກເຊິ່ງຕໍ່ພາລະກິດສ້າງສາ ແລະ ພັດທະນາປະເທດຊາດຂອງລາວ ກໍຄືການເພີ່ມທະວີ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ, ການຮ່ວມມືຮອບດ້ານ ແລະ ຫຸ້ນສ່ວນຍຸດທະສາດ ຫວຽດນາມ-ລາວ. ຜົນສໍາເລັດ ກອງປະຊຸມໃຫຍ່ຄັ້ງນີ້ ຍັງເປັນຂີດໝາຍຂອງບາດກ້າວພັດທະນາໃໝ່ຂອງການປະຕິວັດລາວ, ຢືນຢັນກໍາລັງແຮງອັນໃຫຍ່ຫຼວງຂອງກ້ອນກໍາລັງມະຫາສາມັກຄີທົ່ວປວງຊົນ, ແນວທາງປ່ຽນແປງໃໝ່ຢ່າງຮອບດ້ານ, ມີຫຼັກການ ແລະ ສືບທອດ ເພື່ອເປົ້າໝາຍປົກປັກຮັກສາ ແລະ ສ້າງສາພັດທະນາປະເທດລາວໃຫ້ໝັ້ນຄົງ ເຂັ້ມແຂງ ຕາມທິດສັງຄົມນິຍົມ.

**2) ຜູ້ໜ້າພິເສດ ຂອງ ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່ ພັກກອມມູນິດຈີນ ມາຊົມເຊີຍຜົນສຳເລັດກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ປປ ລາວ**



ວັນທີ 13 ມັງກອນ 2026, ທີ່ຫ້ອງວ່າການສູນກາງພັກ, ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງ ສະຫາຍ ຫຼິວ ຮາຍຊິງ, ກໍາມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນ ໃນຖານະຜູ້ຕາງໜ້າພິເສດ ຂອງ ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່ ພັກກອມມູນິດຈີນ ພ້ອມຄະນະ ເພື່ອມາຊົມເຊີຍຜົນສໍາເລັດ ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງ ພັກ ປປ ລາວ. ໃນໂອກາດນີ້, ສະຫາຍ ຫຼິວ ຮາຍຊິງ ໄດ້ມອບສານຊົມເຊີຍສະບັບຕົ້ນ ຈາກ ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່ ຄະນະກໍາມະການສູນກາງພັກກອມມູນິດນິດຈີນ ໃຫ້ ສະຫາຍ ທອງລຸນ ສີສຸລິດ; ໄດ້ສະແດງຄວາມຊົມເຊີຍຕໍ່ຜົນສໍາເລັດ ກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ປປ ລາວ ແລະ ສະຫາຍ ທອງລຸນ ສີສຸລິດ ທີ່ໄດ້ຮັບເລືອກຕັ້ງເປັນ ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກ ສະໄໝທີ XII, ເຊິ່ງເປັນການສະແດງໃຫ້ເຫັນເຖິງຄວາມໄວ້ເນື້ອເຊື່ອໃຈຈາກສູນກາງພັກ ແລະ ຜູ້ແທນກອງປະຊຸມໃຫຍ່ ແລະ ຢືນຢັນວ່າ ຝ່າຍຈີນ ຈະສືບຕໍ່ປະສານສົມທົບ ແລະ ຮ່ວມມືກັບພາກສ່ວນທີ່ກ່ຽວຂ້ອງຂອງລາວ ເອົາໃຈໃສ່ຈັດຕັ້ງປະຕິບັດການຕົກລົງ ລະຫວ່າງ ການນໍາສູງສຸດສອງພັກ, ສອງລັດ ລາວ-ຈີນ, ຈີນ-ລາວ ໃນການເພີ່ມພູນຄູນສ້າງສາຍພົວພັນມິດຕະພາບຂອງສອງປະເທດ.

ໃນໂອກາດນີ້, ສະຫາຍ ທອງລຸນ ສີສຸລິດ ໄດ້ຕີລາຄາສູງ ແລະ ສະແດງຄວາມຂອບໃຈ ໂດຍຜ່ານ ສະຫາຍ ຫຼິວ ຮາຍຊິງ ໄປຍັງ ຄະນະບໍລິຫານສູນກາງພັກກອມມູນິດຈີນ ກໍຄື ສະຫາຍເລຂາທິການໃຫຍ່ ສີ ຈິ້ນຜິງ ທີ່ໄດ້ແຕ່ງຕັ້ງ ຜູ້ຕາງໜ້າພິເສດ ມາຊົມເຊີຍຜົນກອງປະຊຸມໃຫຍ່ ຄັ້ງທີ XII ຂອງ ພັກ ປປ ລາວ, ເຊິ່ງສະແດງໃຫ້ເຫັນເຖິງຄວາມສໍາຄັນ ແລະ ຄວາມເອົາໃຈໃສ່ຂອງພັກກອມມູນິດຈີນ ແລະ ປະຊາຊົນຈີນ ທີ່ມີຕໍ່ພັກ ແລະ ປະຊາຊົນລາວບັນດາເຜົ່າ ກໍຄື ສາຍພົວພັນມິດຕະພາບອັນເປັນມູນເຊື້ອ, ການຮ່ວມມືແບບຄູ່ຮ່ວມຍຸດທະສາດຮອບດ້ານ ໝັ້ນຄົງຍາວນານ ຕາມທິດ 4 ດີ ກໍຄືການສ້າງຄູ່ຮ່ວມຊາຕາກໍາ ລາວ-ຈີນ, ຈີນ-ລາວ. ພ້ອມນີ້, ໄດ້ແຈ້ງຜົນສໍາເລັດຂອງກອງປະຊຸມໃຫຍ່ ຄັ້ງທີ XII ຂອງ ພັກ ປປ ລາວ ໂດຍຫຍໍ້ ໃຫ້ຄະນະຊາບ ແລະ ຂອບໃຈ ພັກກອມມູນິດຈີນ ທີ່ໃຫ້ການສະໜັບສະໜູນ ແລະ ຊ່ວຍເຫຼືອ ພັກ ປປ ລາວ ສະເໝີມາ ໂດຍສະເພາະໃນໄລຍະການກະກຽມ ກອງປະຊຸມໃຫຍ່ຂອງພັກໃນຄັ້ງນີ້; ຍິນດີສືບຕໍ່ຮ່ວມກັບສະຫາຍເລຂາທິການໃຫຍ່ ສີ ຈິ້ນຜິງ ເພີ່ມທະວີການນໍາພາຊີ້ນໍາທາງດ້ານການເມືອງ ແລະ ຍຸດທະສາດ ຕໍ່ການພົວພັນຮ່ວມມື ລະຫວ່າງ ສອງພັກ, ສອງລັດ ລາວ-ຈີນ ເພື່ອເສີມຂະຫຍາຍມິດຕະພາບອັນເປັນມູນເຊື້ອ, ລົງເລິກຊຸກຍູ້ຮ່ວມມືຢ່າງຮອບດ້ານ, ຊຸກຍູ້ພາລະກິດແຫ່ງການກໍ່ສ້າງສັງຄົມນິຍົມ ແລະ ພ້ອມກັນຊຸກຍູ້ການສ້າງຄູ່ຮ່ວມຊາຕາກໍາ ລາວ-ຈີນ ເພື່ອປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນພາລະກິດການຮັກສາສັນຕິພາບ, ສະຖຽນລະພາບ ແລະ ການຮ່ວມມືເພື່ອການພັດທະນາຂອງພາກພື້ນ ແລະ ໃນໂລກ. ສະຫາຍ ທອງລຸນ ສີສຸລິດ ຍັງໄດ້ຕີລາຄາສູງ ຕໍ່ສອງຄະນະພົວພັນຕ່າງປະເທດສູນກາງພັກ ລາວ-ຈີນ ທີ່ໄດ້ຕາງໜ້າໃຫ້ສອງພັກ ລົງນາມ “ແຜນການຮ່ວມມື ລະຫວ່າງ ພັກ ປປ ລາວ ແລະ ພັກກອມມູນິດຈີນ ໄລຍະປີ 2026-2030” ໃນໂອກາດມາຢ້ຽມຢາມ ສປປ ລາວ ໃນຄັ້ງນີ້ ແລະ ຊົມເຊີຍ ຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນ ທີ່ປະກອບສ່ວນຢ່າງຕັ້ງໜ້າ ໃນການຈັດຕັ້ງປະຕິບັດ ຄໍາເຫັນສໍາຄັນທີ່ເຫັນດີເປັນເອກະພາບກັນລະຫວ່າງ ການນໍາສູງສຸດ ສອງພັກ, ສອງລັດ ລາວ-ຈີນ, ຈີນ-ລາວ ໃນການເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ການສ້າງຄູ່ຮ່ວມຊາຕາກໍາ ລາວ-ຈີນ ໃຫ້ມີມາດຕະຖານສູງ, ຄຸນນະພາບສູງ ແລະ ລະດັບສູງກວ່າເກົ່າ.

### 3) ຜູ້ປະຈຳການຄະນະເລຂາທິການສູນກາງພັກ ຕ້ອນຮັບການຢ້ຽມຂ່ຳນັບຂອງ ຮອງລັດຖະມົນຕີກະຊວງການຕ່າງປະເທດຫວຽດນາມ



ວັນທີ 14 ມັງກອນ 2026, ທີ່ຫ້ອງວ່າການສູນກາງພັກ, ສະຫາຍ ວິໄລ ຫຼ້າຄຳຟອງ, ກຳມະການກົມການເມືອງສູນກາງພັກ, ຜູ້ປະຈຳການຄະນະເລຂາທິການສູນກາງພັກ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະ ຊວງປ້ອງກັນຄວາມສະຫງົບ ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງ ສະຫາຍ ຫງວຽນ ແມ້ງ ເກືອງ, ກຳມະການສູນກາງພັກ, ຮອງເລຂາຄະນະພັກ, ຮອງລັດຖະມົນຕີກະຊວງການຕ່າງປະເທດຫວຽດນາມ ພ້ອມດ້ວຍຄະນະ ໃນໂອກາດເດີນທາງມາເຮັດວຽກຢູ່ ສປປ ລາວ. ສະຫາຍ ວິໄລ ຫຼ້າຄຳຟອງ, ໄດ້ຕີລາຄາສູງຕໍ່ການມາເຄື່ອນໄຫວເຮັດວຽກຂອງ ສະຫາຍ ຫງວຽນ ແມ້ງ ເກືອງ ພ້ອມດ້ວຍຄະນະ ໃນຄັ້ງນີ້; ສະແດງຄວາມປິຕິຊົມຊື່ນ ແລະ ຂອບໃຈເປັນຢ່າງຍິ່ງ ຕໍ່ຄຳຊົມເຊີຍຈາກບັນດາສະຫາຍການນຳຂັ້ນສູງຂອງ ສສ ຫວຽດນາມ ໂດຍສະເພາະແມ່ນຄຳຢື້ຢາມຖາມຂ່າວອັນອົບອຸ່ນ ທີ່ເຕັມໄປດ້ວຍນ້ຳໃຈໄມຕີຈິດ ຄວາມຮັກແພງຂອງ ສະຫາຍຜູ້ປະຈຳການ ຄະນະເລຂາທິການສູນກາງພັກກອມມູນິດຫວຽດນາມ ພາຍຫຼັງທີ່ໄດ້ຮັບການມອບໝາຍໜ້າທີ່ໃໝ່ເປັນຜູ້ປະຈຳການຄະນະເລຂາທິການສູນກາງພັກປະຊາຊົນປະຕິວັດລາວ ສະໄໝທີ XII, ພ້ອມນັ້ນກໍ່ໄດ້ແຈ້ງໃຫ້ຊາບໂດຍຫຍໍ້ ຜົນສຳເລັດກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງ ພັກປະຊາຊົນປະຕິວັດລາວ ພາຍໃຕ້ຄຳຂວັນ **“ຍົກສູງບົດບາດການນຳພາທີ່ເຂັ້ມແຂງຂອງພັກ, ຕັ້ງໜ້າສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ, ສືບຕໍ່ບູລະນະລະບອບປະຊາທິປະໄຕປະຊາຊົນ ໃຫ້ໜັກແໜ້ນ ກ້າວຂຶ້ນສູ່ສັງຄົມນິຍົມ”**, ເນັ້ນໜັກວ່າ ກອງປະຊຸມໃຫຍ່ຄັ້ງນີ້ ເປັນເຫດການປະຫວັດສາດທາງດ້ານການເມືອງ-ສັງຄົມ ອັນສຳຄັນຍິ່ງ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ເປັນຂີດໝາຍບາດກ້າວພັດທະນາໃໝ່ຂອງພາລະກິດປ່ຽນແປງໃໝ່ຢ່າງຮອບດ້ານ. ຕີລາຄາສູງສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ, ການຮ່ວມມືຮອບດ້ານ ແລະ ຫຸ້ນສ່ວນຍຸດທະສາດ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ເຮັດໃຫ້ການພົວພັນລາວ-ຫວຽດນາມ ເລິກເຊິ່ງຂຶ້ນສູ່ລະດັບໃໝ່ກວ່າເກົ່າ, ການພົວພັນທາງດ້ານການເມືອງມີຄວາມສະໜິດແໜ້ນ ແລະ ໄວ້ວາງໃຈກັນໃນລະດັບສູງ ສະແດງອອກຜົນສຳເລັດຂອງ ການແລກປ່ຽນຄະນະຜູ້ແທນຂັ້ນສູງ ພັກ, ລັດ ສອງປະເທດໃນໄລຍະຜ່ານມາ ແລະ ການພົວພັນຮ່ວມມືໃນຂົງເຂດຕ່າງໆນັບມື້ເຂົ້າສູ່ລວງເລິກ ແລະ ມີປະສິດທິຜົນ; ຢືນຢັນວ່າເຖິງສະພາບການສາກົນ, ພາກພື້ນ ຈະຜັນແປໄປແນວໃດກໍຕາມ ແຕ່ພັກ, ລັດ ແລະ ປະຊາຊົນລາວບັນດາເຜົ່າ ຈະສືບຕໍ່ຮ່ວມກັບ ພັກ, ລັດ ແລະ ປະຊາຊົນຫວຽດນາມອ້າຍນ້ອງ ໃນການເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ, ການຮ່ວມມືຮອບດ້ານ ແລະ ຫຸ້ນສ່ວນຍຸດທະສາດ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ໃຫ້ນັບມື້ນັບແຕກອອກອອກຜົນ, ຂຽວສົດງົດງາມ ແລະ ໝັ້ນຄົງທະນົງແກ່ນຊົ່ວກາລະນານ, ໂດຍສະເພາະ ໃນຕໍ່ໜ້ານີ້ ຈະໄດ້ຮ່ວມກັນຈັດຕັ້ງປະຕິບັດບັນດາຂໍ້ຕົກລົງຂັ້ນສູງຂອງສອງພັກ, ສອງລັດ ໃຫ້ເປັນຮູບປະທຳ ແລະ ປະກົດຜົນເປັນຈິງຂຶ້ນເລື້ອຍໆ ເພື່ອນຳເອົາຜົນປະໂຫຍດຕົວຈິງ ມາສູ່ປະຊາຊົນສອງຊາດລາວ-ຫວຽດນາມ.

## III. ການເຄື່ອນໄຫວຂອງ ຄະນະພົວພັນຕ່າງປະເທດສູນກາງພັກ

**1) ລັດຖະມົນກະຊວງການຕ່າງປະເທດຫວຽດນາມ ສົ່ງສານຊົມເຊີຍຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ**

ສະຫາຍ ເລ ຮວາຍ ຈຸງ, ເລຂາທິການສູນກາງພັກ, ລັດຖະມົນຕີກະຊວງການຕ່າງປະເທດຫວຽດນາມ ສົ່ງສານຊົມເຊີຍ ສະຫາຍ ບຸນເຫຼືອ ພັນດານຸວົງ, ກໍາມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກປະຊາຊົນປະຕິວັດລາວ ເນື່ອງໃນໂອກາດທີ່ໄດ້ຮັບການເລືອກຕັ້ງເປັນ ກໍາມະການ ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ ສະໄໝທີ XII ເຊິ່ງເນື້ອໃນສານໄດ້ລະບຸວ່າ: ເນື່ອງໃນໂອກາດທີ່ ສະຫາຍໄດ້ຮັບເລືອກຕັ້ງເປັນຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ຂ້າພະເຈົ້າ ຂໍສົ່ງຄໍາອວຍພອນໄຊຢ່າງສຸດອົກສຸດໃຈມາຍັງສະຫາຍ ເຊິ່ງສິ່ງດັ່ງກ່າວເປັນການຮັບຮູ້ຂອງພັກ ຕໍ່ຄວາມສາມາດໃນການນໍາພາ ແລະ ການປະກອບສ່ວນຢ່າງມີປະສິດທິຜົນຂອງ ສະຫາຍ ໃນວຽກງານພົວພັນຕ່າງປະເທດຂອງພັກຕະຫຼອດໄລຍະຜ່ານມາ; ຂ້າພະເຈົ້າ ເຊື່ອໝັ້ນວ່າ ດ້ວຍບົດຮຽນ, ປະສົບປະການ ແລະ ນໍ້າໃຈຟົດຟື້ນໃນວຽກງານ, ສະຫາຍ ຈະສືບຕໍ່ເຮັດສໍາເລັດທຸກໜ້າທີ່ວຽກງານ ທີ່ພັກ ແລະ ປະຊາຊົນລາວ ໄວ້ວາງໃຈມອບໝາຍໃຫ້, ປະກອບສ່ວນຈັດຕັ້ງຂະຫຍາຍບັນດາເປົ້າໝາຍທີ່ ກອງປະຊຸມໃຫຍ່ຄັ້ງທີ XII ວາງອອກຢ່າງມີໄຊ; ຂ້າພະເຈົ້າຢືນຢັນວ່າ ຈະສືບຕໍ່ປະສານສົມທົບຢ່າງແໜ້ນແຟ້ນກັບ ສະຫາຍ ໃນໄລຍະຕໍ່ໜ້າ, ປະກອບສ່ວນນໍາເອົາສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ, ການຮ່ວມມືຮອບດ້ານ ແລະ ຫຸ້ນສ່ວນຍຸດທະສາດ ຫວຽດ ນາມ-ລາວ ກ້າວເຂົ້າສູ່ໄລຍະພັດທະນາໃໝ່, ນັບມື້ເລິກເຊິ່ງກວ້າງຂວາງ ແລະ ມີປະສິດທິຜົນ; ພວກຂ້າພະເຈົ້າ ຕີລາຄາສູງຕໍ່ການປະກອບສ່ວນສໍາຄັນຂອງ ຄະນະພົວພັນຕ່າງປະເທດສູນກາງພັກປະຊາຊົນປະຕິວັດລາວ ໃນພາລະກິດປ່ຽນ ແປງໃໝ່, ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ, ປະກອບສ່ວນເຂົ້າໃນການເພີ່ມທະວີ ແລະ ພັດທະນາ ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ, ການຮ່ວມມືຮອບດ້ານ ແລະ ຫຸ້ນສ່ວນຍຸດທະສາດ, ກໍຄືຄວາມໄວ້ເນື້ອເຊື່ອໃຈກັນ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ຫວຽດນາມ-ລາວ ເວົ້າລວມ ເວົ້າສະເພາະແມ່ນ ການພົວພັນມິດຕະພາບອັນເປັນມູນເຊື້ອ, ການຮ່ວມມືຮອບດ້ານ ລະຫວ່າງ ຄະນະພົວພັນຕ່າງປະເທດສູນກາງພັກປະຊາຊົນປະຕິວັດລາວ ແລະ ຄະນະພັກ ກະຊວງການຕ່າງປະເທດຫວຽດນາມ ກໍຄື ຂອງສອງພັກ ຫວຽດນາມ-ລາວ. ໃນໂອກາດປີໃໝ່ສາກົນ 2026, ຂໍອວຍພອນໃຫ້ ສະຫາຍ ພ້ອມດ້ວຍບັນດາສະຫາຍການນໍາ ແລະ ພະນັກງານ ຄະນະພົວພັນຕ່າງປະເທດສູນກາງພັກປະຊາຊົນປະຕິວັດລາວ ທຸກຖ້ວນໜ້າ ຈົ່ງມີສຸຂະພາບເຂັ້ມແຂງ, ມີຄວາມຜາສຸກ ແລະ ເຮັດສໍາເລັດໜ້າທີ່ ທີ່ໄດ້ຮັບມອບໝາຍ, ປະກອບສ່ວນຈັດຕັ້ງຜັນຂະຫຍາຍແນວທາງການຕ່າງປະເທດຂອງ ພັກປະຊາຊົນປະຕິວັດລາວ ໄດ້ຢ່າງມີໄຊ. ອວຍພອນໃຫ້ ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ, ການຮ່ວມມືຮອບດ້ານ ແລະ ຫຸ້ນສ່ວນຍຸດທະສາດ ຫວຽດນາມ-ລາວ, ລາວ-ຫວຽດນາມ ຈົ່ງສວຍສົດງົດງາມ ແລະ ໝັ້ນຄົງຂະໜົງແກ່ນຕະຫຼອດການະນານ.

**2) ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກຂອງສອງພັກ ລາວ-ຈີນ ພົບປະ ແລະ ລົງນາມແຜນການຮ່ວມມືສອງພັກ**




ໂດຍປະຕິບັດຕາມສັນຍາຮ່ວມມື ລະຫວ່າງສອງຄະນະພົວພັນຕ່າງປະເທດສູນກາງພັກ ລາວ-ຈີນ 2023-2027, ໃນວັນທີ 13 ມັງກອນ 2026 ທີ່ ຄະນະພົວພັນຕ່າງປະເທດສູນກາງພັກ, ສະຫາຍ ບຸນເຫຼືອ ພັນດານຸວົງ, ກໍາມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ໄດ້ພົບປະເຮັດວຽກກັບ ສະຫາຍ ຫຼິວ ຫາຍຊີງ, ກໍາມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນ, ຜູ້ຕາງໜ້າພິເສດ ຂອງ ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່ ພັກກອມມູນິດຈີນ ມາຊົມເຊີຍຜົນສໍາເລັດ ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງ ພັກ ປປ ລາວ.

ສອງຝ່າຍ ໄດ້ແລກປ່ຽນຄຳຄິດເຫັນ ແລະ ຕີລາຄາສູງຕໍ່ຜົນສຳເລັດຂອງການຮ່ວມມື ລະຫວ່າງ ສອງຄະນະພົວພັນຕ່າງປະເທດສູນກາງພັກ ໃນການເຮັດບົດບາດເປັນເສນາທິການ ໃນການຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດແຜນການຮ່ວມມື 2 ພັກ ໄລຍະສົກປີ 2021-2025 ແລະ ສະແດງຄວາມເປັນເອກະພາບກັນ ສືບຕໍ່ຮ່ວມມືກັນໃນການເປັນໃຈກາງຊຸກຍູ້ການຈັດຕັ້ງປະຕິບັດ ແຜນແມ່ບົດວ່າດ້ວຍການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ ກໍຄື ການຈັດຕັ້ງປະຕິບັດຄຳເຫັນຊີ້ນຳ ແລະ ການຕົກລົງ ລະຫວ່າງ ການນຳສູງສຸດ ສອງພັກ, ສອງລັດ ລາວ-ຈີນ ໃນການເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ ໃຫ້ມີມາດຕະຖານສູງ, ຄຸນນະພາບສູງ ແລະ ລະດັບສູງກວ່າເກົ່າ.

ນອກນັ້ນ, ສະຫາຍ ບຸນເຫຼືອ ພັນດານຸວົງ ຕາງໜ້າໃຫ້ພັກປະຊາຊົນປະຕິວັດລາວ ແລະ ສະຫາຍ ຫຼິວ ຫາຍຊິງ ຕາງໜ້າໃຫ້ພັກກອມມູນິດຈີນ ຮ່ວມລົງນາມແຜນການຮ່ວມມືລະຫວ່າງສອງພັກສະບັບໃໝ່ ໄລຍະປີ 2026-2030, ເຊິ່ງແຜນການຮ່ວມມືດັ່ງກ່າວ ໄດ້ເປັນບ່ອນອີງສຳຄັນໃນການພົວພັນຮ່ວມມື ລະຫວ່າງ 2 ສູນກາງພັກ, ບັນດາອົງການອ້ອມຂ້າງສູນກາງພັກ ແລະ ການຮ່ວມມືບຳລຸງສ້າງພະນັກງານລະຫວ່າງສອງພັກ ລາວ-ຈີນ ໃນໄລຍະ 5 ປີຕໍ່ໜ້າ.

**3) ຄະນະພົວພັນຕ່າງປະເທດສູນກາງພັກ ຈັດປາຖະກະຖາເຜີຍແຜ່ເອກະສານສຳຄັນຂອງພັກ ແລະ ຂອງຊາດ**




ໃນວັນທີ 23 ມັງກອນ 2026, ທີ່ຄະນະພົວພັນຕ່າງປະເທດສູນກາງພັກ, ໄດ້ຈັດພິທີປາຖະກະຖາ ເອກະສານກ່ຽວກັບການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ແລະ ວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 77 ປີ (20 ມັງກອນ 1949 – 20 ມັງກອນ 2026). ໃຫ້ກຽດເປັນປະທານເຜີຍແຜ່ໂດຍ ສະຫາຍ ບຸນເຫຼືອ ພັນດານຸວົງ, ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ມີບັນດາສະຫາຍໃນຄະນະບໍລິຫານງານພັກ, ຄະນະກົມ, ພະນັກງານບຳນານ ແລະ ພະນັກງານຂອງ ຄຕພ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ, ສະຫາຍ ບຸນເຫຼືອ ພັນດານຸວົງ ໄດ້ເຜີຍແຜ່ເອກະສານເຊື່ອມຊຶມມະຕິ ຂອງ ກົມການເມືອງສູນກາງພັກ ສະບັບເລກທີ 26/ກມສພ, ລົງວັນທີ 12 ກັນຍາ 2025 ວ່າດ້ວຍການເພີ່ມທະວີການນຳພາ-ຊີ້ນຳ ອົງຄະນະພັກທຸກຂັ້ນຕໍ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V, ເອກະສານສິດເປັນເຈົ້າຂອງປະຊາຊົນ, ເນື້ອໃນສຳຄັນຂອງກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V; ພ້ອມນັ້ນ, ຍັງໄດ້ແນະນຳເພີ່ມເຕີມໃຫ້ພະນັກງານ ຄະນະພົວພັນຕ່າງ ປະເທດສູນກາງພັກ ເຂົ້າໃຈແຈ້ງ ຕໍ່ແນວທາງ-ນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດ, ເສີມຂະຫຍາຍນ້ຳໃຈຮັກຊາດ, ຕັ້ງໜ້າກະກຽມ ແລະ ເຂົ້າຮ່ວມຂະບວນການເລືອກຕັ້ງຄັ້ງນີ້ດ້ວຍຄວາມເປັນເຈົ້າການ ແລະ ຮັບຜິດຊອບສູງໃຫ້ກາຍເປັນປາງບຸນໃຫຍ່ຂອງຊາດ ແລະ ຮັບປະກັນການເສີມຂະຫຍາຍສິດປະຊາທິປະໄຕຢ່າງແຂງແຮງ, ເຕັມສ່ວນ, ກວ້າງຂວາງ ທົ່ວເຖິງ ແລະ ເລິກເຊິ່ງ ເພື່ອເລືອກເຟັ້ນໃຫ້ໄດ້ຜູ້ຄົບມາດຖານເງື່ອນໄຂ ຢ່າງຄົບຖ້ວນ ຕາມທີ່ກຳນົດໄວ້ໃນກົດໝາຍ ເພື່ອເປັນຕົວແທນປົກປ້ອງເອົາສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນລາວບັນດາເຜົ່າ. ພ້ອມທັງຮັບປະກັນຄວາມສະຫງົບໃຫ້ໄດ້ 100%, ຮັບປະກັນບໍ່ໃຫ້ມີບັດຕາຍ 100% ແລະ ຜູ້ທີ່ມີສິດປ່ອນບັດໃຫ້ໄປປ່ອນບັດດ້ວຍຄວາມສະໝັກໃຈ 100%.

ຈາກນັ້ນ, ສະຫາຍຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ທວນຄືນມູນເຊື້ອວັນສ້າງຕັ້ງກອງທັບປະຊາຊົນລາວ, ໂດຍໄດ້ຍົກໃຫ້ເຫັນເຖິງການກຳເນີດກຳລັງປະກອບອາວຸດ ແມ່ນເຫດການສຳຄັນປະຫວັດສາດຂອງຊາດລາວ ທັງເປັນບາດລ້ຽວສຳຄັນສຳລັບການເຕີບໃຫຍ່ຂະຫຍາຍຕົວ ແລະ ຕັດສິນໄຊຊະນະຂອງຂະບວນການປະຕິວັດ ພາຍໃຕ້ການນຳພາ-ຊີ້ນຳເດັດຂາດ, ໂດຍກົງຮອບດ້ານຂອງ ພັກປະຊາຊົນປະຕິວັດລາວ; ວັນສ້າງຕັ້ງກອງທັບປະຊາຊົນລາວ 20 ມັງກອນ 1949 ປຽບເໝືອນແສງໄຟນ້ອຍໆທີ່ເປັນຈຸດເລີ່ມຕົ້ນຂອງທວານໄຟທີ່ມີລັດສະໝີເປັ່ງປະກາຍເປັນວົງກວ້າງໃຫຍ່ໄພສານ, ໄດ້ຮັບການສະໜັບສະໜູນ, ຊ່ວຍເຫຼືອ ເຂົ້າຮ່ວມນັບມື້ນັບກວ້າງຂວາງຈາກມະຫາຊົນ ເຮັດໃຫ້ກຳລັງປະກອບອາວຸດເຕີບໃຫຍ່ເຂັ້ມແຂງຂຶ້ນເປັນກ້າວໆ, ຈົນສາມາດທັບມ້າງທຸກການຮຸກຮານທັງ

ແບບເກົ່າ ແລະ ແບບໃໝ່, ກາຍເປັນກຳລັງແຮງແກ່ນສານຂອງການປະຕິວັດລາວ, ຍູ້ແຮງແນວທາງປ່ຽນແປງໃໝ່ ສູ່ລວງເລິກທີ່ແຂງແຮງຮອບດ້ານໃນການນຳພາຂອງພັກ ໃນເງື່ອນໄຂໃໝ່, ສົມກັບນາມມະຍົດ "ກອງທັບລາວວິລະຊົນ ຂອງຊາດລາວວິລະຊົນ".

**4) ຫົວໜ້າ ຄະນະພົວພັນຕ່າງປະເທດສູນກາງພັກ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງເອກອັກຄະລັດຖະທູດຜູ້ມີອຳນາດເຕັມ ແຫ່ງ ສະຫະພັນຣັດເຊຍ ປະຈຳ ສປປ ລາວ**




ວັນທີ 21 ມັງກອນ 2026, ທີ່ຄະນະພົວພັນຕ່າງປະເທດສູນກາງພັກ, ທ່ານ ບຸນເຫຼືອ ພັນດານຸວົງ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ທ່ານ ເຊຣເກ ຊິດສະກີ, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສ.ຣັດເຊຍ ປະຈຳ ສປປ ລາວ. ໃນໂອກາດດັ່ງກ່າວ, ທ່ານ ບຸນເຫຼືອ ພັນດານຸວົງ ໄດ້ສະແດງຄວາມຍິນດີຕ້ອນຮັບຢ່າງອົບອຸ່ນ ພ້ອມທັງສະແດງຄວາມຊົມເຊີຍ ທ່ານ ເຊຣເກ ຊິດສະກີ ທີ່ໄດ້ຖືກແຕ່ງຕັ້ງໃຫ້ມາດຳລົງຕຳແໜ່ງເປັນ ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສ.ຣັດເຊຍ ປະຈຳ ສປປ ລາວ ຜູ້ໃໝ່ ແລະ ເຊື່ອໝັ້ນວ່າ ດ້ວຍຄວາມຮູ້ ແລະ ປະສົບການຂອງທ່ານທູດ, ການພົວພັນຮ່ວມມື ລາວ-ຣັດເຊຍ ທີ່ມີຄວາມໜັກແໜ້ນຢູ່ແລ້ວ ໂດຍສະເພາະທາງດ້ານການເມືອງ ກໍຄື ການພົວພັນ ລະຫວ່າງ ສອງພັກກຳອຳນາດ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ດ້ານການສຶກສາ ຈະໄດ້ຮັບການເສີມຂະຫຍາຍເຂົ້າສູ່ລວງເລິກຍິ່ງຂຶ້ນ. ສ່ວນການຮ່ວມມືດ້ານການຄ້າ-ການລົງທຶນ, ດ້ານກະສິກຳ, ການທ່ອງທ່ຽວ, ການທູດປະຊາຊົນ ແລະ ການຮ່ວມມື ລະຫວ່າງ ອົງການຈັດຕັ້ງມະຫາຊົນ, ຄະນະພົວພັນຕ່າງປະເທດ ພ້ອມແລ້ວທີ່ຈະເຮັດວຽກຮ່ວມກັນຢ່າງໃກ້ຊິດກັບ ສະຖານທູດ ເພື່ອຊຸກຍູ້ໃຫ້ມີບາດກ້າວຂະຫຍາຍຕົວໃໝ່ ເພື່ອຜົນປະໂຫຍດຕົວຈິງຂອງ ປະຊາຊົນສອງຊາດ ກໍຄືເພື່ອສົ່ງເສີມສັນຕິພາບ, ມິດຕະພາບ ແລະ ການຮ່ວມມື ເພື່ອການພັດທະນາໃນພາກພື້ນ ແລະ ໃນໂລກ. ພ້ອມດຽວກັນນີ້, ທ່ານຫົວໜ້າ ຄຕພ ຍັງໄດ້ຖືໂອກາດດັ່ງກ່າວ ສະແດງຄວາມຮູ້ບຸນຄຸນຕໍ່ການຊ່ວຍເຫຼືອອັນລ້ຳຄ່າຂອງລັດຖະບານຣັດເຊຍ ຕະຫຼອດໄລຍະທີ່ຜ່ານມາ ໂດຍສະເພາະການຊ່ວຍເຫຼືອດ້ານວຽກງານ ປກສ-ປກຊ, ທຶນການສຶກສາ, ມະນຸດສະທຳ, ການເກັບກູ້ລະເບີດທີ່ຍັງບໍ່ທັນແຕກ ແລະ ອື່ນໆ, ຊຶ່ງທັງໝົດລ້ວນແຕ່ເປັນການປະກອບສ່ວນອັນໃຫຍ່ຫຼວງເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ.

**5) ຫົວໜ້າ ຄະນະພົວພັນຕ່າງປະເທດສູນກາງພັກ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງເອກອັກຄະລັດຖະທູດຜູ້ມີອຳນາດເຕັມ ແຫ່ງ ສ.ຕວັກກີ ປະຈຳ ສປປ ລາວ**



ວັນທີ 16 ມັງກອນ 2026, ທີ່ ຄະນະພົວພັນຕ່າງປະເທດສູນກາງພັກ, ທ່ານ ບຸນເຫຼືອ ພັນດານຸວົງ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ທ່ານ ນ. ໂອຢ່າ ຢ່າຊາຣ, ເອກອັກຄະລັດຖະທູດຜູ້ມີອຳນາດເຕັມ ແຫ່ງ ສ.ຕວັກກີ ປະຈຳ ສປປ ລາວ.

ໃນໂອກາດນີ້, ທ່ານ ບຸນເຫຼືອ ພັນດານຸວົງ ໄດ້ສະແດງຄວາມຍິນດີຕ້ອນຮັບຢ່າງອົບອຸ່ນ ແລະ ຊົມເຊີຍ ທ່ານທູດ ທີ່ຖືກແຕ່ງຕັ້ງມາປະຕິບັດໜ້າທີ່ຢູ່ ສປປ ລາວ, ຕີລາຄາສູງຕໍ່ສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມ ລະຫວ່າງ ສປປ ລາວ ແລະ ສ. ຕວັກກີ ຕະຫຼອດໄລຍະຜ່ານມາ, ພ້ອມທັງສະແດງຄວາມຂອບໃຈຢ່າງສູງ ໂດຍຜ່ານ ທ່ານທູດ ໄປຍັງ ລັດຖະບານຕົວກກີ ທີ່ໄດ້ໃຫ້ການຊ່ວຍເຫຼືອແກ່ ສປປ ລາວ ໃນຂົງເຂດວຽກງານຕ່າງໆ ໂດຍສະເພາະ ແມ່ນດ້ານການສຶກສາ, ການເສີມສ້າງຂີດຄວາມອາດສາມາດໃຫ້ແກ່ພະນັກງານ-ລັດຖະກອນຂອງລາວ ເພື່ອ ປະກອບສ່ວນຮັບໃຊ້ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 44-45 ໃນປີ 2024 ທີ່ ສປປ ລາວ ເປັນເຈົ້າພາບ. ສອງຝ່າຍ ໄດ້ແລກປ່ຽນຄຳຄິດຄຳເຫັນນຳກັນ ກ່ຽວກັບ ການເສີມຂະຫຍາຍດ້ານການຄ້າ-ການລົງທຶນ, ການທ່ອງທ່ຽວ ແລະ ການໄປມາ-ຫາສູ່ເຊິ່ງກັນ ແລະ ກັນ ຂອງປະຊາຊົນທັງສອງຊາດ, ໄດ້ສະແດງຄວາມຂອບໃຈຕໍ່ການໃຫ້ການສະໜັບສະ ໜູນເຊິ່ງກັນ ແລະ ກັນ ໃນເວທີຫຼາຍຝ່າຍ. ພ້ອມດຽວກັນນີ້, ທ່ານ ບຸນເຫຼືອ ພັນດານຸວົງ ຍັງໄດ້ສະເໜີໃຫ້ ທ່ານທູດ ຊ່ວຍຊຸກຍູ້ໃນການດຶງດູດນັກລົງທຶນຈາກ ຕວັກກີ ມາດຳເນີນທຸລະກິດຢູ່ລາວໃຫ້ຫຼາຍຂຶ້ນ.

**6) ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຕ້ອນຮັບການເຂົ້າຢ້ຽມອຳລາຂອງ ເອກອັກຄະລັດຖະທູດຜູ້ມີອຳນາດ ເຕັມ ສ.ອາເມຣິກາ**



ວັນທີ 16 ມັງກອນ 2026, ທີ່ ຄະນະພົວພັນຕ່າງປະເທດ ສູນກາງພັກ, ທ່ານ ບຸນເຫຼືອ ພັນດານຸວົງ, ກຳມະການ ສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງ ພັກ ໄດ້ຕ້ອນຮັບການເຂົ້າຢ້ຽມອຳລາ ຂອງ ທ່ານ ນາງ ແຮັດເຕີ ວາເຣຍອາວາ (Heather Variara), ເອກອັກ ຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສະຫະລັດ ອາເມຣິກາ ປະຈຳ ສປປ ລາວ, ໃນໂອກາດທີ່ສຳເລັດ ການປະຕິບັດໜ້າທີ່ການທູດຢູ່ ສປປ ລາວ.

ໃນໂອກາດດັ່ງກ່າວ, ທ່ານ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາ ຄາສູງ ຕໍ່ຜົນສຳເລັດໃນການປະຕິບັດໜ້າທີ່ການທູດຢູ່ ສປປ ລາວ ຕະຫຼອດໄລຍະຜ່ານມາ ໂດຍໄດ້ປະກອບສ່ວນຢ່າງ ຕັ້ງໜ້າເຂົ້າໃນການຊຸກຍູ້ ແລະ ສົ່ງເສີມການຮ່ວມມື ລະຫວ່າງສອງປະເທດ ລາວ-ອາເມຣິກາ ໃນຫຼາຍດ້ານ ເປັນຕົ້ນ ແມ່ນການຊຸກຍູ້ການແລກປ່ຽນການຢ້ຽມຢາມ ລະຫວ່າງ ຄະນະຜູ້ແທນຂອງ ສ. ອາເມຣິກາ ແລະ ສປປ ລາວ ໃນຫຼາຍ ລະດັບ ແລະ ຫຼາຍຂະແໜງການ, ລວມທັງການຈັດຕັ້ງປະຕິບັດໂຄງການຮ່ວມມືຕ່າງໆ ເຊັ່ນ: ວຽກງານປາບປາມຢາ ເສບຕິດ ແລະ ການບັງຄັບໃຊ້ກົດໝາຍ, ວຽກງານເກັບກູ້ລະເບີດບໍ່ທັນແຕກ (UXO), ການຮ່ວມມືດ້ານເສດຖະກິດ-ການຄ້າ, ການສຶກສາ, ສາທາລະນະສຸກ, ໂພຊະນາການ, ວັດທະນະທຳ ແລະ ອື່ນໆ, ພິເສດ ແມ່ນໄດ້ປະກອບສ່ວນເຂົ້າ ໃນການສະເຫຼີມສະຫຼອງ ຄົບຮອບ 70 ປີ ການສ້າງຕັ້ງສາຍພົວພັນການທູດ ລະຫວ່າງ ສປປ ລາວ ແລະ ສ. ອາເມຣິກາ ແລະ ການຮ່ວມມືກັນໃນໂຄງການຂຸດຄົ້ນກະດູກ ແລະ ສິ່ງເສດເຫຼືອຂອງທະຫານອາເມຣິກາ ທີ່ຫາຍສາບສູນໃນປາງ ສົງຄາມຢູ່ລາວ (MIA) ຄົບຮອບ 40 ປີ ໃນປີ 2025 ຜ່ານມາ.

## IV. ການເຄື່ອນໄຫວຂອງ ວຽກງານການທູດປະຊາຊົນ

**1) ສະມາຄົມມິດຕະພາບ ລາວ-ກູບາ ຈັດພິທີລະນຶກເຖິງ ທ່ານ ໂຮເຊ ມາກຕີ ເນື່ອງໃນໂອກາດວັນຄ້າຍວັນເກີດ**



ວັນທີ 28 ມັງກອນ 2026, ສະມາຄົມມິດຕະພາບ ລາວ-ກູບາ ຮ່ວມກັບສະຖານເອກອັກຄະລັດຖະທູດ ແຫ່ງ ສ.ກູບາ ປະຈຳ ສປປ ລາວ ໄດ້ຈັດພິທີວາງກະຕ່າດອກໄມ້ ເພື່ອລະນຶກເຖິງ ທ່ານ ໂຮເຊ ມາກຕີ, ວິລະຊົນແຫ່ງຊາດກູບາ ເນື່ອງໃນໂອກາດວັນເກີດຂອງ ທ່ານ ໂຮເຊ ມາກຕີ ຄົບຮອບ 173 ປີ (28 ມັງກອນ 1853 - 28 ມັງກອນ 2026) ທີ່ໂຮງຮຽນ ມສ ດົງບັງ ມິດຕະພາບ ລາວ-ກູບາ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ.

ໃຫ້ກຽດເຂົ້າຮ່ວມໃນພິທີມີ: ທ່ານ ນາງ ບັນດິດ ປະທຸມວັນ, ຮອງປະທານສະມາຄົມມິດຕະພາບ ລາວ-ກູບາ, ທ່ານ ລີໂອເນວ ກອນຊາເລັຊ (Leonel Gonzalez), ທີ່ປຶກສາເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມແຫ່ງ ສ.ກູບາ ປະຈຳ ສປປ ລາວ. ນອກຈາກນັ້ນ ຍັງມີຄະນະບໍລິຫານງານ ສະມາຄົມມິດຕະພາບລາວ-ກູບາ, ຄະນະກົມ, ຄະນະພະແນກ, ຜູ້ຕາງໜ້າຈາກອົງການປົກຄອງເມືອງໄຊທານີ, ອະດີດນັກສຶກສາລາວຈົບຈາກ ກູບາ, ອາຈານ, ນັກສຶກສາຈາກພາວິຊາພາສາແອັດສະປາຍ ມະຫາວິທະຍາໄລແຫ່ງຊາດ, ໂຮງຮຽນ ມສ ດົງບັງ ມິດຕະພາບ ລາວ-ກູບາ ແລະ ອຳນາດການປົກຄອງບ້ານດົງບັງ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ ກໍໃຫ້ກຽດເຂົ້າຮ່ວມຢ່າງພ້ອມພຽງ.

ການຈັດພິທີຄັ້ງນີ້ ສະແດງເຖິງຄວາມເຄົາລົບຮັກ, ກະຕັນຍູຮູ້ບຸນຄຸນອັນໃຫຍ່ຫຼວງຕໍ່ ທ່ານ ໂຮເຊ ມາກຕີ, ຜູ້ທີ່ໄດ້ເສຍສະຫຼະເພື່ອການປະຕິວັດຂອງກູບາ, ທັງເປັນການສະແດງເຖິງການຮັດແໜ້ນສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ມີມູນເຊື້ອອັນດີງາມລະຫວ່າງ 2 ພັກ, 2 ລັດ, ປະຊາຊົນ 2 ຊາດລາວ ແລະ ກູບາ ໃຫ້ນັບມື້ມີບາດກ້າວໃໝ່ ພ້ອມທັງເຮັດໃຫ້ນັກຮຽນນັກສຶກສາ, ປະຊາຊົນລາວຮັບຮູ້ ແລະ ເຂົ້າໃຈເຖິງປະຫວັດສາດແກ່ງການຕໍ່ສູ້ປະຕິວັດອັນກ້າແກ່ນເປັນຈິດໜຶ່ງໃຈດຽວຂອງປະຊາຊົນກູບາ ແລະ ໝາກຜົນຂອງສາຍພົວພັນມິດຕະພາບ, ການຮ່ວມມືທີ່ເປັນມູນເຊື້ອອັນດີງາມ ລະຫວ່າງ ລາວ-ກູບາ ແລະ ທັງເປັນໂອກາດຮຽນຮູ້ກ່ຽວກັບຊີວິດ ແລະ ການເຄື່ອນໄຫວປະຕິວັດຂອງ ທ່ານ ໂຮເຊ ມາກຕີ, ວິລະຊົນແຫ່ງກູບາ.